ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 70 ສປປ

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ.**

~~~~~~~~~~~~~

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67, ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 24/ຄປຈ,ລົງວັນທີ 10 ພະຈິກ 2004.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ພະຈິກ 2004.

ປະທານປະເທດ ແຫ່ງ ສປປລາວ

ຄຳໄຕ ສີພັນດອນ.
~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 08 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການພັດທະນາ ແລະປົກປ້ອງແມ່ຍິງ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

- ອີງຕາມການສະເໜີຂອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 258/ສຍລ, ລົງວັນທີ 25/06/2004.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການພັດທະນາ ແລະປົກປ້ອງແມ່ຍິງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 22 ຕຸລາ 2004;

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ການພັດທະນາ ແລະປົກປ້ອງແມ່ຍິງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 08/ ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2004

# ກົດໝາຍ
# ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ວາງອອກເພື່ອຮອງຮັບ ແລະ ຍົກສູງຖານະບົດບາດຂອງແມ່ຍິງ; ກຳນົດເນື້ອໃນພື້ນຖານ, ມາດຕະການຂອງການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ, ຄວາມຮັບຜິດຊອບຂອງລັດ, ສັງຄົມ ແລະຄອບຄົວ ຕໍ່ແມ່ຍິງ ແນໃສ່ສົ່ງເສີມຄວາມຮູ້ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ, ຄວາມສະເໝີພາບ ຍິງ-ຊາຍ, ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສະກັດກັ້ນ ແລະຕ້ານການຄ້າແມ່ຍິງ ແລະເດັກນ້ອຍ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍໃນຄອບຄົວ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າຮ່ວມ ແລະເປັນກຳລັງແຮງໃນການປົກປັກຮັກສາ ແລະພັດທະນາປະເທດຊາດ.

**ມາດຕາ 2. ບົດບາດຂອງແມ່ຍິງ**

ແມ່ຍິງໄດ້ຮ່ວມກັບເພດຊາຍໃນການຕໍ່ສູ້ແລະເສຍສະຫລະໃນພາລະກິດຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດ.

ແມ່ຍິງມີບົດບາດໃນທຸກຂົງເຂດວຽກງານທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການອະນຸລັກຮັກສາ ແລະເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະສິ່ງທີ່ເປັນເອກກະລັກຂອງແມ່ຍິງລາວ.

ແມ່ຍິງມີບົດບາດຮ່ວມກັບຄອບຄົວໃນການພັດທະນາ, ເບິ່ງແຍງ, ລ້ຽງດູ ແລະສຶກສາອົບຮົມສະມາຊິກຄອບຄົວໃຫ້ເປັນພົນລະເມືອງດີຂອງຊາດ.

**ມາດຕາ 3. ນະໂຍບາຍຕໍ່ແມ່ຍິງ**

ລັດມີນະໂຍບາຍພັດທະນາ, ສົ່ງເສີມຄວາມກ້າວໜ້າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ດ້ວຍການສ້າງທຸກເງື່ອນໄຂໃຫ້ແມ່ຍິງມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ, ມີວຽກເຮັດງານທຳ ແລະ ມີສິດເທົ່າທຽມກັບເພດຊາຍ ໂດຍບໍ່ຈຳແນກຖານະທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ.

ສັງຄົມຕ້ອງເຂົ້າຮ່ວມໃນການປະຕິບັດນະໂຍບາຍຂອງລັດຕໍ່ແມ່ຍິງຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 4. ອົງການຈັດຕັ້ງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວແມ່ນອົງການຈັດຕັ້ງມະຫາຊົນໜຶ່ງ ຊຶ່ງເປັນຕົວແທນແຫ່ງສິດ, ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະເດັກນ້ອຍ, ເປັນບ່ອນເຕົ້າໂຮມຄວາມສາມັກຄີ ແລະປຸກລະດົມແມ່ຍິງໃຫ້ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງແມ່ຍິງລາວບັນດາເຜົ່າ, ປົກປັກຮັກສາສິດ ແລະຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະເດັກນ້ອຍ ໂດຍສະເພາະແມ່ນສະມາຊິກໃນອົງການຈັດຕັ້ງຂອງຕົນ.

**ມາດຕາ 5. ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືສາກົນ ໃນຂົງເຂດວຽກງານແມ່ຍິງໃຫ້ກວ້າງຂວາງໃນຫຼາຍດ້ານ ແລະດ້ວຍຫຼາຍຮູບການເຊັ່ນ: ການພັດທະນາ ແລະສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການຈັດຕັ້ງປະຕິບັດສົນທິສັນຍາສາກົນກ່ຽວກັບແມ່ຍິງ, ການຮ່ວມມືໃນການສະກັດກັ້ນ ແລະຕ້ານການຄ້າແມ່ຍິງ ແລະເດັກນ້ອຍ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ການແລກປ່ຽນບົດຮຽນ, ການຊ່ວຍເຫຼືອ ແລະການຮ່ວມມືອື່ນໆ.

## ພາກທີ II
## ການພັດທະນາແມ່ຍິງ

### ໝວດທີ 1
### ຄວາມໝາຍ ແລະ ຄວາມສຳຄັນຂອງການພັດທະນາແມ່ຍິງ

**ມາດຕາ 6. ຄວາມໝາຍຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນພາກສ່ວນໜຶ່ງຂອງການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ແມ່ຍິງມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ ແລະມີຄຸນສົມບັດສິນທຳປະຕິວັດ.

**ມາດຕາ 7. ຄວາມສຳຄັນຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນຄວາມຈຳເປັນເພື່ອໃຫ້ແມ່ຍິງສາມາດເຂົ້າຮ່ວມຢ່າງມີປະສິດທິພາບໃນທຸກຂົງເຂດວຽກງານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ ເພື່ອເຮັດໃຫ້ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດໄດ້ຮັບຜົນດີຂຶ້ນ.

## ໝວດທີ 2
## ເນື້ອໃນການພັດທະນາແມ່ຍິງ

**ມາດຕາ 8. ເນື້ອໃນພື້ນຖານຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ມີເນື້ອໃນພື້ນຖານດັ່ງນີ້:

- ການພັດທະນາທາງດ້ານຮ່າງກາຍ;
- ການພັດທະນາທາງດ້ານແນວຄິດຈິດໃຈ;
- ການພັດທະນາທາງດ້ານການສຶກສາ;
- ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ.

ການພັດທະນາຄອບຄົວກໍເປັນປັດໃຈໜຶ່ງທີ່ສຳຄັນ ໃຫ້ແກ່ການພັດທະນາດ້ານຕ່າງໆທີ່ກ່າວມາຂ້າງເທິງນີ້.

**ມາດຕາ 9. ການພັດທະນາທາງດ້ານຮ່າງກາຍ**

ການພັດທະນາແມ່ຍິງທາງດ້ານຮ່າງກາຍ ແມ່ນການເຮັດໃຫ້ແມ່ຍິງມີການຂະຫຍາຍຕົວທາງດ້ານຮ່າງກາຍຢ່າງສົມບູນ, ມີສຸຂະພາບແຂງແຮງ, ມັນສະໝອງດີ, ມີຄຸນນະພາບຊີວິດທີ່ດີ ແລະມີອາຍຸຍືນ.

**ມາດຕາ 10. ການພັດທະນາທາງດ້ານແນວຄິດຈິດໃຈ**

ການພັດທະນາແມ່ຍິງທາງດ້ານແນວຄິດຈິດໃຈ ແມ່ນການເຮັດໃຫ້ແມ່ຍິງມີສຸຂະພາບຈິດທີ່ດີ, ມີຈິດໃຈໜັກແໜ້ນເຂັ້ມແຂງ, ມີອຸດົມການ, ຄຸນສົມບັດສິນທຳປະຕິວັດ, ມີວັດທະນະທຳອັນດີງາມ, ມີກິລິຍາມາລະຍາດດີ, ມີຄວາມດຸໝັ່ນຂະຫຍັນພຽນ, ພ້ອມກັບສະມາຊິກຄອບຄົວຂອງຕົນ ສ້າງສັງຄົມ ແລະຄອບຄົວໃຫ້ຮັ່ງມີ, ຜາສຸກ ແລະກ້າວໜ້າ.

**ມາດຕາ 11. ການພັດທະນາທາງດ້ານການສຶກສາ**

ການພັດທະນາແມ່ຍິງທາງດ້ານການສຶກສາ ແມ່ນການສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການສຶກສາຂັ້ນພື້ນຖານຢ່າງທົ່ວເຖິງ, ໄດ້ຮັບການສຶກສາທາງດ້ານວິທະຍາສາດທຳມະຊາດ ແລະສັງຄົມນັບ

ມີນັບສູງຂຶ້ນ ແນໃສ່ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແມ່ຍິງຢ່າງຮອບດ້ານ ແລະສົ່ງເສີມຜູ້ທີ່ມີພອນສະຫວັນ.

### ມາດຕາ 12. ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ

ການພັດທະນາແມ່ຍິງທາງດ້ານວິຊາຊີບ ແລະ ສີມືແຮງງານ ແມ່ນການສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການຝຶກອົບຮົມວິຊາຊີບ, ມີສີມືແຮງງານ ແລະປະສົບການ, ມີວິໄນແຮງງານ ເພື່ອໃຫ້ແມ່ຍິງໄດ້ມີວຽກເຮັດງານທຳໃນສັງຄົມເຊັ່ນດຽວກັນກັບເພດຊາຍ.

## ພາກທີ III

## ການປົກປ້ອງສິດ, ຜົນປະໂຫຍດ ແລະ ພັນທະຂອງແມ່ຍິງ

## ໝວດທີ 1

## ຄວາມສະເໝີພາບຍິງ-ຊາຍ

### ມາດຕາ 13. ສິດສະເໝີພາບຍິງ-ຊາຍ

ສິດສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽມກັນໃນການພັດທະນາຕົນເອງ; ຍິງ ແລະ ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

### ມາດຕາ 14. ສິດສະເໝີພາບທາງດ້ານການເມືອງ

ລັດຮັບປະກັນໃຫ້ແມ່ຍິງ ໄດ້ຮັບສິດທາງດ້ານການເມືອງເທົ່າທຽມກັບເພດຊາຍ ເຊັ່ນ: ສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ, ເຂົ້າຮ່ວມການເຄື່ອນໄຫວວຽກງານ, ປຶກສາຫາລື ແລະຕົກລົງບັນຫາສຳຄັນຂອງຊາດ, ໄດ້ຮັບການແຕ່ງຕັ້ງຢ່າງເໝາະສົມເຂົ້າໃນຕຳແໜ່ງຂັ້ນຕ່າງໆ ຂອງບັນດາອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມ.

ສັງຄົມ ແລະ ຄອບຄົວສ້າງເງື່ອນໄຂໃຫ້ແມ່ຍິງໄດ້ປະຕິບັດສິດຕ່າງໆ ທີ່ກ່າວມາໃນວັກເທິງນີ້.

### ມາດຕາ 15. ສິດສະເໝີພາບທາງດ້ານເສດຖະກິດ

ລັດມີນະໂຍບາຍສົ່ງເສີມໃຫ້ແມ່ຍິງມີສິດດຳເນີນການຜະລິດ, ທຸລະກິດ ແລະ ການບໍລິການທີ່ຖືກຕ້ອງຕາມກົດໝາຍ, ມີສິດໃນການເລືອກວິຊາຊີບ, ການມີວຽກເຮັດງານທຳ, ການໄດ້ຮັບຄ່າຕອບແທນ ແລະມີສິດໄດ້ຮັບນະໂຍບາຍຈາກການອອກແຮງງານ.

ແມ່ຍິງທີ່ມີຕໍາແໜ່ງ, ໜ້າທີ່, ວຽກງານ, ມີຄວາມຮັບຜິດຊອບລະດັບດຽວກັນກັບເພດຊາຍມີສິດ ໄດ້ຮັບຄ່າຕອບແທນ ແລະນະໂຍບາຍຕ່າງໆ ເທົ່າທຽມກັນ.

ສັງຄົມ ແລະ ຄອບຄົວສ້າງເງື່ອນໄຂໃຫ້ແມ່ຍິງໄດ້ປະຕິບັດສິດ ແລະ ໄດ້ຮັບຜົນປະໂຫຍດຕ່າງໆ ທາງດ້ານເສດຖະກິດທີ່ກ່າວມາເທິງນີ້.

**ມາດຕາ 16. ສິດສະເໝີພາບທາງດ້ານວັດທະນະທໍາ-ສັງຄົມ**

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບສິດເທົ່າທຽມກັບເພດຊາຍ ທາງດ້ານວັດທະນະທໍາ-ສັງຄົມ ເຊັ່ນ: ສິດເຂົ້າຮ່ວມກິດຈະກໍາຕ່າງໆ ທາງດ້ານວັດທະນະທໍາ-ສັງຄົມ, ການເຄື່ອນໄຫວສິນລະປະວັນນະຄະດີ, ກິລາກາຍະກໍາ, ການສຶກສາ, ສາທາລະນະສຸກ ແລະການຄົ້ນຄວ້າ, ປະດິດສ້າງທາງດ້ານວັດທະນະທໍາ-ສັງຄົມ, ດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຢີ.

ສັງຄົມ ແລະ ຄອບຄົວສ້າງເງື່ອນໄຂ, ໃຫ້ໂອກາດແກ່ແມ່ຍິງໄດ້ເຂົ້າຮ່ວມການເຄື່ອນໄຫວຕ່າງໆ ທາງດ້ານວັດທະນະທໍາ-ສັງຄົມທີ່ກ່າວມາເທິງນີ້.

**ມາດຕາ 17. ສິດສະເໝີພາບທາງດ້ານຄອບຄົວ**

ລັດ ແລະ ສັງຄົມສົ່ງເສີມ ແລະ ປົກປ້ອງຄວາມສະເໝີພາບຍິງ - ຊາຍພາຍໃນຄອບຄົວ.

ຍິງ ແລະ ຊາຍມີສິດເທົ່າທຽມກັນໃນທຸກດ້ານກ່ຽວກັບສາຍພົວພັນຄອບຄົວ.

ແມ່ຍິງທີ່ມີອາຍຸແຕ່ 18 ປີຂຶ້ນໄປ ມີເສລີພາບໃນການເລືອກຄູ່ຄອງ ເພື່ອສ້າງຄອບຄົວ.

ເມຍມີສິດເລືອກເອົານາມສະກຸນຂອງຜົວ ຫຼືຈະຮັກສານາມສະກຸນເດີມຂອງຕົນໄວ້ກໍໄດ້.

ເມຍມີສິດເທົ່າທຽມກັນກັບຜົວ ກ່ຽວກັບສິນສົມສ້າງ.

ຜົວເມຍ ມີສິດເທົ່າທຽມກັນໃນການປຶກສາຫາລື, ຕົກລົງ ແລະແກ້ໄຂບັນຫາພາຍໃນຄອບຄົວຢ່າງເປັນເອກະພາບໃນການເລືອກບ່ອນຢູ່, ການປະກອບອາຊີບ, ການມີລູກແລະອື່ນໆ; ຜົວເມຍຕ້ອງຮັກແພງ, ເຄົາລົບນັບຖື, ເບິ່ງແຍງ ຊ່ວຍເຫຼືອຊຶ່ງກັນ ແລະກັນ, ພ້ອມກັນ ລ້ຽງດູ, ສຶກສາອົບຮົມລູກ ແລະກໍ່ສ້າງກັນໃຫ້ກາຍເປັນຄອບຄົວວັດທະນະທໍາ, ມີຄວາມສາມັກຄີປອງດອງກັນ, ມີຄວາມຜາສຸກ ແລະກ້າວໜ້າ.

ລູກສາວ ແລະລູກຊາຍມີສິດເທົ່າທຽມກັນໃນການສືບທອດມູນມໍຣະດົກ ແລະໄດ້ຮັບການສຶກສາຮໍ່າຮຽນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 18. ສິດໃນການຮ້ອງຂໍ, ຮ້ອງຟ້ອງ**

ໃນກໍລະນີທີ່ບຸກຄົນ ຫຼື ການຈັດຕັ້ງຫາກໄດ້ຈໍາກັດ, ຂັດຂວາງ ຫຼື ລະເມີດສິດສະເໝີພາບທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ຫຼື ຄອບຄົວແລ້ວ ແມ່ຍິງມີສິດສະເໜີຄວາມເຫັນ, ຮ້ອງຂໍ, ຮ້ອງຟ້ອງຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

## ໝວດທີ 2
## ສິດ, ຜົນປະໂຫຍດສະເພາະ ແລະ ພັນທະຂອງແມ່ຍິງ

**ມາດຕາ 19. ສິດ ແລະ ຜົນປະໂຫຍດໃນຂົງເຂດແຮງງານ**

ແມ່ຍິງໄດ້ຮັບສິດ ແລະ ຜົນປະໂຫຍດໃນຂົງເຂດແຮງງານ ເປັນຕົ້ນ: ການຮັບປະກັນເງື່ອນໄຂ ແລະ ສິ່ງແວດລ້ອມໃນການອອກແຮງງານທີ່ປອດໄພ, ສະຫວັດດີການ, ຄ່າຕອບແທນ ແລະ ນະໂຍບາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 20. ສິດ ແລະ ຜົນປະໂຫຍດໃນຄອບຄົວ**

ແມ່ຍິງໄດ້ຮັບສິດ ແລະ ຜົນປະໂຫຍດໃນຄອບຄົວດັ່ງນີ້:

ໃນເວລາເມຍຖືພາ ຫຼື ລູກມີອາຍຸບໍ່ຮອດໜຶ່ງປີ ຜົວບໍ່ມີສິດຂໍຢ່າຮ້າງ ແຕ່ເມຍມີສິດຂໍຢ່າຮ້າງໄດ້.

ໃນກໍລະນີທີ່ມີການຢ່າຮ້າງ ເມຍມີບຸລິມະສິດໃນການສະເໜີເອົາລູກນ້ອຍມາຢູ່ນຳຕົນ.

ເມື່ອມີການຮ່ວມປະເວນີກັນ ຫຼື ມີລູກກ່ອນການແຕ່ງດອງ ຖ້າວ່າຊາຍຊູ້ຫາກບໍ່ເອົາຍິງຊູ້ເປັນເມຍ ຍິງຊູ້ມີສິດຮຽກເອົາຄ່າເສຍຫາຍຈາກຊາຍຊູ້ ແລະມີສິດຮ້ອງຂໍເອົາຄ່າລ້ຽງດູລູກຈົນເຖິງກະສຽນອາຍຸ 18 ປີ.

ແມ່ມີສິດຕາງໜ້າລູກທີ່ຢູ່ໃນທ້ອງໃນການສືບທອດ ແລະຄຸ້ມຄອງມູນມໍຣະດົກ ເມື່ອມີການແບ່ງປັນມູນມໍຣະດົກ.

**ມາດຕາ 21. ສິດ ແລະ ຜົນປະໂຫຍດໃນກົດໝາຍອາຍາ**

ສິດ ແລະ ຜົນປະໂຫຍດຂອງແມ່ຍິງໃນກົດໝາຍອາຍາມີດັ່ງນີ້:

ແມ່ຍິງກະທຳຜິດໃນເວລາຖືພາ ຈະໄດ້ຮັບການຫຼຸດຜ່ອນໂທດ.

ແມ່ຍິງຖືພາ ຫຼື ມີລູກນ້ອຍອາຍຸບໍ່ທັນເຖິງແປດປີ ພາຍຫຼັງທີ່ໄດ້ປະຕິບັດໂທດຕັດອິດສະລະພາບແລ້ວ ຈະບໍ່ຖືກໂທດຈຳກັດທີ່ຢູ່ ຊຶ່ງເປັນໂທດເພີ່ມ.

ແມ່ຍິງກະທຳຜິດໃນເວລາຖືພາ ຈະບໍ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼືປະຫານຊີວິດ.

ແມ່ຍິງທີ່ຖືກລົງໂທດປະຫານຊີວິດຈະຖືກໂຈະການປະຕິບັດໂທດດັ່ງກ່າວໄວ້ຊົ່ວຄາວ ຖ້າຜູ້ກ່ຽວຫາກຖືພາ ຊຶ່ງລາຍລະອຽດຈະມີລະບຽບການສະເພາະຕ່າງຫາກ.

**ມາດຕາ 22. ສິດ ແລະ ຜົນປະໂຫຍດທາງດ້ານການຮັກສາສຸຂະພາບ**

ລັດເອົາໃຈໃສ່ຮັກສາສຸຂະພາບຂອງແມ່ ແລະເດັກ. ຄອບຄົວມີພັນທະເບິ່ງແຍງແມ່ ແລະເດັກໃຫ້ມີສຸຂະພາບແຂງແຮງ ແລະສົມບູນດີ.

ແມ່ຍິງມີສິດໄດ້ຮັບການຮັກສາ, ກວດສຸຂະພາບ ແລະ ສັກຢາກັນພະຍາດ ຕາມລະບຽບການ ເປັນຕົ້ນແມ່ຍິງໃນໄວເດັກ, ໄວໜຸ່ມ ແລະ ໄວຈະເລີນພັນ ລວມທັງແມ່ຍິງຢູ່ເຂດຫ່າງໄກສອກຫຼີກ.

ໃນເວລາແມ່ຍິງອອກລູກນັ້ນ ຄວນໃຫ້ມີແພດ ຫຼື ໝໍຕໍາແຍເບິ່ງແຍງນໍາ ຕາມເງື່ອນໄຂຕົວຈິງ. ຫ້າມບຸກຄົນ ຫຼື ການຈັດຕັ້ງບັງຄັບແມ່ຍິງຖືພາໃຫ້ໄປອອກລູກຢູ່ປ່າ, ບ່ອນເປົ່າປ່ຽວ, ຫ້າມທໍາຮ້າຍແມ່ຍິງ ແລະ ເດັກນ້ອຍ ຍ້ອນຄວາມເຊື່ອຖືງມງວາຍຂອງຕົນ ຫຼື ຍ້ອນສາເຫດອື່ນ.

ໃນເວລາເມຍອອກລູກ ຫຼື ເຈັບເປັນ ຜົວມີສິດຂໍລາພັກຕາມລະບຽບການ ເພື່ອເບິ່ງແຍງສຸຂະພາບຂອງເມຍ ແລະລູກ.

ນອກຈາກສິດ ແລະ ຜົນປະໂຫຍດສະເພາະທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ແມ່ຍິງຍັງມີ ສິດ ແລະ ຜົນປະໂຫຍດອື່ນໆອີກ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 23. ພັນທະຂອງແມ່ຍິງ**

ໃນຖານະເປັນພົນລະເມືອງລາວ ແມ່ຍິງມີພັນທະພື້ນຖານ ດັ່ງນີ້:

1. ພັນທະເຄົາລົບລັດຖະທໍາມະນູນ ແລະກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດໍາລົງຊີວິດຂອງສັງຄົມ ແລະຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ;
2. ພັນທະເສຍພາສີ ແລະ ສ່ວຍສາອາກອນຕາມລະບຽບກົດໝາຍ;
3. ພັນທະປົກປັກຮັກສາປະເທດຊາດ ແລະປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ພ້ອມກັນນັ້ນແມ່ຍິງຍັງມີພັນທະຮ່ວມກັບຄອບຄົວ ແລະສັງຄົມ ໃນການປົກປັກຮັກສາຮີດຄອງປະເພນີ, ວັດທະນະທໍາອັນດີງາມທີ່ເປັນເອກະລັກຂອງຊາດ ແລະຂອງແມ່ຍິງລາວ.

ນອກຈາກພັນທະທີ່ໄດ້ກໍານົດໄວ້ຂ້າງເທິງນີ້ແລ້ວ ແມ່ຍິງຍັງມີພັນທະອື່ນໆອີກ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ພາກທີ IV
## ການປົກປ້ອງແມ່ຍິງ ແລະ ເດັກນ້ອຍ ຈາກການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ

### ໝວດທີ 1
### ການສະກັດກັ້ນ ແລະ ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ

ມາດຕາ 24. **ການຄ້າແມ່ຍິງ ແລະ ເດັກນ້ອຍ**

ການຄ້າແມ່ຍິງ ແມ່ນການຊອກຫາ, ການໃຫ້ບ່ອນລີ້ຊ່ອນ, ການນຳສົ່ງ ຫຼື ການຮັບເອົາແມ່ຍິງຢູ່ພາຍໃນ ຫຼື ຕ່າງປະເທດ ດ້ວຍການຕົວະຍົວະຫຼອກລວງ, ການຂົ່ມຂູ່, ການບັງຄັບ, ການຜູກມັດດ້ວຍໜີ້ສິນ ຫຼື ດ້ວຍຮູບການອື່ນໆ ເພື່ອຈຸດປະສົງຂູດຮີດແຮງງານ, ຄ້າໂສເພນີ, ເຜີຍແຜ່ສິ່ງລາມົກ, ສິ່ງທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ, ຕັດອະໄວຍະວະຕ່າງໆ ຂອງຮ່າງກາຍ ຫຼື ຫາຜົນປະໂຫຍດອື່ນໆ ທີ່ຜິດກົດໝາຍ.

ການກະທຳຕ່າງໆ ທີ່ກ່າວມາເທິງນີ້ຕໍ່ເດັກອາຍຸບໍ່ເຖິງ 18 ປີ ກໍຖືວ່າເປັນການຄ້າເດັກນ້ອຍ ເຖິງວ່າຈະບໍ່ມີການຕົວະຍົວະຫຼອກລວງ, ການຂົ່ມຂູ່, ການບັງຄັບ ຫຼື ການຜູກມັດດ້ວຍໜີ້ສິນກໍຕາມ.

ບຸກຄົນໃດທີ່ໄດ້ໃຫ້ການຮ່ວມມືແກ່ຜູ້ກະທຳຜິດທີ່ກ່າວມາຂ້າງເທິງນີ້ ດ້ວຍວິທີການຕ່າງໆ ເຊັ່ນ: ການໃຫ້ຄວາມຄິດເຫັນ, ຊັບສິນ, ພາຫະນະອຸປະກອນ, ການຊຸກເຊື່ອງຄົນ, ການຊຸກເຊື່ອງຊັບສິ່ງຂອງທີ່ໄດ້ມາຈາກການກະທຳຜິດ ຫຼື ການລົບລ້າງຮ່ອງຮອຍຂອງການກະທຳຜິດຈະຖືວ່າເປັນຜູ້ສົມຮູ້ຮ່ວມຄິດໃນການຄ້າແມ່ຍິງ ແລະເດັກນ້ອຍ.

ການຄ້າແມ່ຍິງ ແລະ ເດັກນ້ອຍ ເປັນການກະທຳຜິດທາງອາຍາ.

ມາດຕາ 25. **ສິດຂອງຜູ້ຖືກເຄາະຮ້າຍ**

ຜູ້ຖືກເຄາະຮ້າຍໝາຍເຖິງ ຜູ້ທີ່ໄດ້ຮັບຄວາມເສຍຫາຍໂດຍກົງຈາກການຄ້າແມ່ຍິງ ແລະເດັກນ້ອຍ.

ຜູ້ຖືກເຄາະຮ້າຍມີສິດດັ່ງນີ້:

1. ຂໍຄວາມຊ່ວຍເຫລືອຈາກບຸກຄົນທີ່ຢູ່ໃກ້ຄຽງ;
2. ແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ;
3. ໃຫ້ການ ແລະ ສະເໜີຫຼັກຖານຕ່າງໆ ທີ່ພົວພັນເຖິງຄະດີຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ຮ້ອງຂໍຄ່າເສຍ ຫາຍ ແລະ ໄດ້ຮັບການຟື້ນຟູສະພາບຂອງຕົນ ເພື່ອປັບຕົວເຂົ້າສູ່ສັງຄົມ;
5. ໄດ້ຮັບການປົກປ້ອງ, ເບິ່ງແຍງ ເພື່ອຮັບປະກັນຄວາມປອດໄພຂອງຕົນ;
6. ຈະບໍ່ຖືກດຳເນີນຄະດີອາຍາ ແລະບໍ່ຖືກກັກຂັງໃນສະຖານການກະທຳຜິດກ່ຽວກັບການຄ້າແມ່ຍິງ ແລະເດັກນ້ອຍເຊັ່ນ: ການເປັນໂສເພນີ, ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ;
7. ບໍ່ໃຫ້ຖ່າຍຮູບ, ບັນທຶກພາບ, ເຜີຍແຜ່ພາບທີ່ຈະພາໃຫ້ເສຍກຽດຊື່ສຽງ;
8. ໄດ້ຮັບການຊ່ວຍເຫຼືອທີ່ເໝາະສົມທາງດ້ານສະຖານທີ່ພັກເຊົາ, ອາຫານ, ເຄື່ອງນຸ່ງຫົ່ມ, ການບໍລິການທາງດ້ານການແພດ, ການຝຶກອົບຮົມວິຊາຊີບ, ການກັບຄືນພູມລຳເນົາ ແລະອື່ນໆ;
9. ໄດ້ຮັບສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 26. ພັນທະຂອງສັງຄົມ

ບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ຮູ້ ຫຼື ພົບເຫັນຜູ້ຖືກເຄາະຮ້າຍຈາກການຄ້າແມ່ຍິງ ແລະ ເດັກນ້ອຍ ຫຼື ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການຄ້າແມ່ຍິງ ແລະເດັກນ້ອຍ ຕ້ອງແຈ້ງຄວາມຕໍ່ອົງການປົກຄອງບ້ານ, ຕໍ່ເຈົ້າໜ້າທີ່ຕຳຫຼວດ ຫຼື ຕໍ່ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ພ້ອມດຽວກັນນັ້ນກໍຕ້ອງໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ.

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະຄອບຄົວ ຕ້ອງໂຄສະນາສຶກສາອົບຮົມໃຫ້ທົ່ວສັງຄົມຮູ້ເຖິງການກະທຳຕ່າງໆທີ່ເປັນການຄ້າແມ່ຍິງ ແລະເດັກນ້ອຍ ແລະ ຜົນຮ້າຍ ຂອງການກະທຳດັ່ງກ່າວ ເພື່ອບໍ່ໃຫ້ຕົກເປັນເຫຍື່ອ ແລະເປັນເຈົ້າການໃນການສະກັດກັ້ນ ແລະຕ້ານການຄ້າແມ່ຍິງ ແລະເດັກນ້ອຍ.

ເພື່ອສະກັດກັ້ນ ແລະຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ລັດຖະບານສ້າງຕັ້ງຄະນະກຳມະການຕ້ານການຄ້າມະນຸດຂຶ້ນ.

### ມາດຕາ 27. ການດຳເນີນຄະດີຕໍ່ຜູ້ກະທຳຜິດ

ເມື່ອໄດ້ຮັບແຈ້ງຄວາມກ່ຽວກັບການຄ້າແມ່ຍິງ ແລະ ເດັກນ້ອຍແລ້ວ ເຈົ້າໜ້າທີ່ຕຳຫຼວດຕ້ອງດຳເນີນຄະດີຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເປັນຕົ້ນຕ້ອງດຳເນີນການສືບສວນ-ສອບສວນໂດຍດ່ວນ, ຮີບຮ້ອນເອົາຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ ຫຼື ຜູ້ມາແຈ້ງຄວາມລວມທັງພະຍານພ້ອມທັງຮັກສາຄວາມລັບ ແລະ ຄວາມປອດໄພໃຫ້ພວກກ່ຽວ. ຖ້າຫາກມີຫຼັກຖານພຽງພໍກໍປະກອບສຳນວນຄະດີສົ່ງໃຫ້ໄອຍະການປະຊາຊົນ ເພື່ອສັ່ງຟ້ອງຂຶ້ນສານພິຈາລະນາຕັດສິນລົງໂທດຜູ້ກະທຳຜິດ ແລະໃຊ້ແທນຄ່າເສຍຫາຍ ລວມທັງຄ່າປົວແປງຈິດໃຈ ແລະຄ່າປ່ວຍການຕ່າງໆ.

### ມາດຕາ 28. ການຊ່ວຍເຫຼືອຂອງເຈົ້າໜ້າທີ່ຕໍ່ຜູ້ຖືກເຄາະຮ້າຍ

ໃນເວລາດຳເນີນຄະດີນັ້ນ ເຈົ້າໜ້າທີ່ຕຳຫຼວດຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ແພດ, ນັກສັງຄົມສົງເຄາະ ແລະພາກສ່ວນອື່ນໆ ເພື່ອໃຫ້ການຊ່ວຍເຫຼືອອັນຈຳເປັນ ແລະຮີບດ່ວນ, ໃຫ້ການບໍລິການທາງດ້ານການແພດ, ໃຫ້ຄຳປຶກສາ ແລະນຳສົ່ງຜູ້ຖືກເຄາະຮ້າຍໄປສະຖານທີ່ພັກເຊົາທີ່ປອດໄພ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍເປັນເດັກນັ້ນ ຕ້ອງເອົາໃຈໃສ່ເປັນພິເສດກ່ຽວກັບການຟື້ນຟູທາງດ້ານຮ່າງກາຍ ແລະຈິດໃຈ, ຕອບສະໜອງຄວາມຕ້ອງການສະເພາະຂອງເດັກ, ໃຫ້ເດັກໄດ້ຮັບຜູ້ປົກປ້ອງ, ໃຫ້ການຊ່ວຍເຫຼືອເດັກກັບຄືນສູ່ຄອບຄົວ ແລະສັງຄົມ.

ສຳລັບຄົນລາວທີ່ເປັນຜູ້ຖືກເຄາະຮ້າຍຢູ່ຕ່າງປະເທດ ສະຖານທູດ ຫຼື ກົງສູນລາວປະຈຳປະເທດນັ້ນ ຕ້ອງໃຫ້ການຊ່ວຍເຫຼືອອັນຈຳເປັນ ແລະ ຮີບດ່ວນແກ່ຜູ້ຖືກເຄາະຮ້າຍ ເປັນຕົ້ນຄວາມປອດ

ໄພ ແລະສະຫວັດດີການ ພ້ອມທັງປະສານກັບເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດນັ້ນ ເພື່ອດຳເນີນຄະດີຕໍ່ຜູ້ກະທຳຜິດ, ຈາກນັ້ນກໍໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍກັບຄືນປະເທດ.

ສຳລັບຄົນຕ່າງປະເທດທີ່ເປັນຜູ້ຖືກເຄາະຮ້າຍຢູ່ ສປປ ລາວ ນອກຈາກຈະປະຕິບັດຕາມວັກທີສາມເທິງນີ້ແລ້ວ ເຈົ້າໜ້າທີ່ຂອງລາວຕ້ອງພົວພັນກັບສະຖານທູດ ຫຼື ກົງສູນປະເທດຂອງຜູ້ຖືກເຄາະຮ້າຍ ປະຈຳ ສປປລາວ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອຊ່ວຍໃຫ້ຜູ້ຖືກເຄາະຮ້າຍກັບຄືນປະເທດ.

## ໝວດທີ 2
## ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ

### ມາດຕາ 29. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ ແມ່ນການກະທຳ ຫຼືການເມີນເສີຍ ຂອງບຸກຄົນໃດບຸກຄົນໜຶ່ງໃນຄອບຄົວ ຊຶ່ງສ້າງຜົນກະທົບຕໍ່ຮ່າງກາຍ, ຈິດໃຈ ຫຼືຊັບສິນຂອງແມ່ຍິງ ຫຼື ເດັກນ້ອຍໃນຄອບຄົວ.

### ມາດຕາ 30. ຜົນກະທົບຕໍ່ຮ່າງກາຍ

ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບຕໍ່ຮ່າງກາຍ ແມ່ນການກະທຳຂອງບຸກຄົນໃດບຸກຄົນໜຶ່ງໃນຄອບຄົວ ຊຶ່ງເຮັດໃຫ້ແມ່ຍິງ ຫຼື ເດັກນ້ອຍຢູ່ໃນຄອບຄົວເສຍຊີວິດ, ເສຍອົງຄະ ຫຼື ໄດ້ຮັບບາດເຈັບ ຊຶ່ງສະແດງອອກໃນການທຸບຕີ, ທໍລະມານ, ການກັກຂັງ, ການຜູກມັດ, ການຂົ່ມຂືນທຳຊຳເລົາ ຫຼື ການກະທຳທີ່ຫຍາບຊ້າ.

### ມາດຕາ 31. ຜົນກະທົບຕໍ່ຈິດໃຈ

ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບຕໍ່ຈິດໃຈ ແມ່ນການກະທຳຂອງ ບຸກຄົນໃດບຸກຄົນໜຶ່ງໃນຄອບຄົວ ຊຶ່ງສ້າງຄວາມເສຍຫາຍຕໍ່ຈິດໃຈຂອງແມ່ຍິງ ຫຼື ເດັກນ້ອຍໃນຄອບຄົວ ເຊັ່ນ: ການທຳມິດສະຈານ, ການບັງຄັບ, ການປ້ອຍດ່າ, ການໃສ່ຮ້າຍ, ການເຍາະເຍີ້ຍສຽດສີ, ການກີດກັ້ນບໍ່ໃຫ້ເຄື່ອນໄຫວວຽກງານຕ່າງໆ ເປັນຕົ້ນວຽກງານສັງຄົມ.

### ມາດຕາ 32. ຜົນກະທົບຕໍ່ຊັບສິນ

ການໃຊ້ຄວາມຮຸນແຮງທີ່ມີຜົນກະທົບຕໍ່ຊັບສິນ ແມ່ນການກະທຳຂອງບຸກຄົນໃດບຸກຄົນໜຶ່ງໃນຄອບຄົວໂດຍເຈດຕະນາ ຊຶ່ງສ້າງຄວາມເສຍຫາຍແກ່ຊັບສິນຂອງຄອບຄົວ ແລະສະແດງອອກໃນການກະທຳຕ່າງໆ ເຊັ່ນ: ການເອົາຊັບສິນຂອງຄອບຄົວໄປນຳໃຊ້ສ່ວນຕົວທີ່ບໍ່ຖືກຕ້ອງຕາມກົດ

ໝາຍ; ການບໍ່ປະຕິບັດພັນທະລ້ຽງດູຄອບຄົວ; ການເຮັດໃຫ້ແມ່ຍິງບໍ່ໄດ້ຮັບສິດສືບທອດມູນມໍຣະດົກຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ; ການທໍາລາຍເຮືອນຊານ, ຊັບສິນຕ່າງໆຂອງຄອບຄົວ.

### ມາດຕາ 33. ສິດຂອງຜູ້ຖືກເຄາະຮ້າຍ

ແມ່ຍິງ ແລະ ເດັກນ້ອຍທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ມີສິດຮ້ອງຂໍຄວາມຊ່ວຍເຫຼືອຈາກສະມາຊິກຂອງຄອບຄົວ, ຜູ້ຢູ່ໃກ້ຄຽງ, ຍາດພີ່ນ້ອງ ຫຼື ແຈ້ງຄວາມຕໍ່ອົງການປົກຄອງບ້ານເພື່ອສຶກສາອົບຮົມຜູ້ໃຊ້ຄວາມຮຸນແຮງໃຫ້ຢຸດເຊົາ ແລະປ່ຽນແປງພຶດຕິກໍາທີ່ບໍ່ດີ ເພື່ອໃຫ້ມີຄວາມຖືກຕ້ອງປອງດອງ ແລະມີຄວາມຜາສຸກພາຍໃນຄອບຄົວ.

ໃນກໍລະນີທີ່ການໃຊ້ຄວາມຮຸນແຮງຫາກເປັນອັນຕະລາຍຮ້າຍແຮງ ຊຶ່ງເປັນການກະທໍາຜິດທາງອາຍານັ້ນ ຜູ້ຖືກເຄາະຮ້າຍມີສິດແຈ້ງຄວາມຕໍ່ເຈົ້າໜ້າທີ່ຕໍາຫຼວດ ເພື່ອແກ້ໄຂຕາມລະບຽບກົດໝາຍ.

### ມາດຕາ 34. ການໃຫ້ຄວາມຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ ແລະ ການປົກປ້ອງຜູ້ໃຫ້ການຊ່ວຍເຫຼືອ

ສະມາຊິກຄອບຄົວທີ່ໄດ້ພົບເຫັນເຫດການ ຫຼື ຮູ້ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍທີ່ຕົກຢູ່ໃນໄພອັນຕະລາຍແກ່ຊີວິດ ຫຼື ຮ່າງກາຍ, ຖືກແຕະຕ້ອງເຖິງຈິດໃຈ ຫຼືໄດ້ຮັບຄວາມເສຍຫາຍທາງດ້ານຊັບສິນ ບຸກຄົນນັ້ນຕ້ອງໃຫ້ຄວາມຊ່ວຍເຫຼືອຕາມລັກສະນະ, ລະດັບຂອງຄວາມຮຸນແຮງ ແລະ ຄວາມຈໍາເປັນຮີບດ່ວນດ້ວຍການເຂົ້າໄປຫ້າມ, ກີດກັ້ນການໃຊ້ ຄວາມຮຸນແຮງ, ໄກ່ເກ່ຍ, ສຶກສາອົບຮົມຄູ່ກໍລະນີດ້ວຍຕົນເອງ ຫຼື ຮ້ອງຂໍໃຫ້ບຸກຄົນອື່ນ ຫຼື ການຈັດຕັ້ງເຂົ້າມາຊ່ວຍເຫຼືອຢ່າງທັນການ.

ຜູ້ທີ່ຢູ່ໃກ້ຄຽງ, ບຸກຄົນອື່ນ ຫຼື ການຈັດຕັ້ງ ທີ່ໄດ້ພົບເຫັນເຫດການ ຫຼື ຖືກຮ້ອງຂໍໃຫ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ຕົກຢູ່ໃນໄພອັນຕະລາຍແກ່ຊີວິດ, ຮ່າງກາຍ, ຖືກແຕະຕ້ອງເຖິງຈິດໃຈ ຫຼືໄດ້ຮັບຄວາມເສຍຫາຍທາງດ້ານຊັບສິນນັ້ນ ຕ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕາມວິທີການທີ່ໄດ້ກ່າວມາໃນວັກເທິງນີ້.

ໃນກໍລະນີທີ່ມີການໃຊ້ຄວາມຮຸນແຮງ ຫາກເປັນອັນຕະລາຍຮ້າຍແຮງ ຊຶ່ງສະແດງອອກດ້ວຍການທໍາຮ້າຍຮ່າງກາຍ, ການຈູດເຜົາ, ການທໍາລາຍມ້າງເພເຮືອນຊານ, ວັດຖຸສິ່ງຂອງ ແລະອື່ນໆ ຕ້ອງໃຫ້ຄວາມຊ່ວຍເຫຼືອໂດຍດ່ວນ ຕາມທີ່ໄດ້ກໍານົດໄວ້ໃນວັກທີ 1 ແລະ 2 ມາດຕາ 28 ຂອງກົດໝາຍສະບັບນີ້.

ບຸກຄົນ ຫຼື ການຈັດຕັ້ງທີ່ໃຫ້ຄວາມຊ່ວຍເຫຼືອຜູ້ຖືກເຄາະຮ້າຍດ້ວຍຄວາມບໍລິສຸດໃຈຈະໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຕາມກົດໝາຍ.

### ມາດຕາ 35. ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ

ເມື່ອມີການໃຊ້ຄວາມຮຸນແຮງທີ່ບໍ່ເປັນອັນຕະລາຍຮ້າຍແຮງເກີດຂຶ້ນ ໃນຄອບຄົວການແກ້ໄຂຕ້ອງເລີ່ມຈາກສະມາຊິກຄອບຄົວ, ຍາດພີ່ນ້ອງໃກ້ຊິດ, ບຸກຄົນໃກ້ຄຽງ, ໜ່ວຍງານໃຫ້ຄໍາປຶກສາ,

ໜ່ວຍໄກ່ເກ່ຍຂັ້ນບ້ານເປັນຜູ້ໄກ່ເກ່ຍສຶກສາອົບຮົມ ບົນພື້ນຖານຄວາມສາມັກຄີປອງດອງ ແລະ ຄວາມຜາສຸກຂອງຄອບຄົວ.

ໃນກໍລະນີທີ່ໜ່ວຍໄກ່ເກ່ຍຂັ້ນບ້ານຫາກບໍ່ສາມາດແກ້ໄຂໄດ້ ຫຼື ມີການໃຊ້ຄວາມຮຸນແຮງທີ່ເປັນອັນຕະລາຍຮ້າຍແຮງແລ້ວ ໜ່ວຍໄກ່ເກ່ຍຂັ້ນບ້ານ, ໜ່ວຍງານໃຫ້ຄໍາປຶກສາ, ຜູ້ຖືກເຄາະຮ້າຍ ຫຼື ຜູ້ຕາງໜ້າຂອງຜູ້ກ່ຽວ ມີສິດໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ຕໍາຫຼວດ.

## ມາດຕາ 36. ການດໍາເນີນຄະດີຂອງເຈົ້າໜ້າທີ່ຕໍາຫຼວດ

ເມື່ອໄດ້ຮັບແຈ້ງຄວາມຈາກໜ່ວຍໄກ່ເກ່ຍຂັ້ນບ້ານ, ໜ່ວຍງານໃຫ້ຄໍາປຶກສາ, ຜູ້ຖືກເຄາະຮ້າຍ ຫຼື ຜູ້ຕາງໜ້າຂອງຜູ້ກ່ຽວແລ້ວ ເຈົ້າໜ້າທີ່ຕໍາຫຼວດຕ້ອງດໍາເນີນການແກ້ໄຂບົນພື້ນຖານຄວາມສາມັກຄີປອງດອງ ແລະຄວາມຜາສຸກຂອງຄອບຄົວ. ຖ້າຄວາມຮຸນແຮງຫາກບໍ່ເປັນອັນຕະລາຍຮ້າຍແຮງກໍໃຫ້ພະຍາຍາມໄກ່ເກ່ຍ, ສຶກສາອົບຮົມຄູ່ກໍລະນີໃຫ້ຄືນດີ ແລະໄວ້ເນື້ອເຊື່ອໃຈຊຶ່ງກັນແລະກັນ.

ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ຫຼື ມີຄວາມຮຸນແຮງທີ່ເປັນອັນຕະລາຍຮ້າຍແຮງນັ້ນໃຫ້ເຈົ້າໜ້າທີ່ດໍາເນີນຄະດີ ແລະ ນໍາໃຊ້ມາດຕະການຕ່າງໆ ຕາມທີ່ກໍານົດໄວ້ໃນກົດໝາຍ.

ໃນການດໍາເນີນຄະດີນັ້ນ ຖ້າຫາກມີຫຼັກຖານຢັ້ງຢືນວ່າເປັນການກະທໍາຜິດທາງອາຍາແລ້ວ ໃຫ້ປະກອບສໍານວນຄະດີສົ່ງໃຫ້ໄອຍະການປະຊາຊົນ ເພື່ອພິຈາລະນາສັ່ງຟ້ອງຂຶ້ນສານຕາມກົດໝາຍ.

## ມາດຕາ 37. ການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ ຊຶ່ງເປັນບັນຫາໜຶ່ງທີ່ເປັນໄພອັນຕະລາຍຕໍ່ສັງຄົມ, ມີຜົນກະທົບຕໍ່ຄອບຄົວ, ພາໃຫ້ຄອບຄົວຂາດຄວາມອົບອຸ່ນ, ແຕກແຍກ, ເຮັດໃຫ້ແມ່ຍິງ ແລະເດັກນ້ອຍບໍ່ສາມາດຢູ່ນໍາຄອບຄົວໄດ້ ແລະຕົກເປັນເຫຍື່ອຂອງການຄ້າແມ່ຍິງແລະເດັກນ້ອຍ, ຢາເສບຕິດ, ໂສເພນີ.

ເພື່ອສະກັດກັ້ນການໃຊ້ຄວາມຮຸນແຮງໃນຄອບຄົວນັ້ນ ອົງການປົກຄອງ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນທຸກຂັ້ນ ລວມທັງອົງການຈັດຕັ້ງສັງຄົມ ຕ້ອງເອົາໃຈໃສ່ໂຄສະນາສຶກສາອົບຮົມ ເພື່ອໃຫ້ຄອບຄົວມີຄວາມຖືກຕ້ອງປອງດອງ, ປະຕິບັດສິດສະເໝີພາບຍິງ-ຊາຍແນໃສ່ເຮັດໃຫ້ສະຖາບັນຄອບຄົວມີຄວາມໝັ້ນທ່ຽງ, ມີຄວາມຜາສຸກ ແລະກ້າວໜ້າ.

## ມາດຕາ 38. ສິດຂອງແມ່ຍິງ ແລະ ເດັກນ້ອຍໃນການໄດ້ຮັບຄໍາປຶກສາ

ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ, ແມ່ຍິງ ແລະ ເດັກນ້ອຍມີສິດໄດ້ຮັບຄໍາປຶກສາ, ຄໍາແນະນໍາທາງດ້ານກົດໝາຍ, ດ້ານແນວຄິດຈິດໃຈ, ດ້ານສຸຂະພາບ ແລະດ້ານອື່ນໆ ຈາກການຈັດຕັ້ງໃຫ້ຄໍາປຶກສາ.

ສຳລັບສິດ ແລະ ໜ້າທີ່ຂອງການຈັດຕັ້ງໃຫ້ຄຳປຶກສານັ້ນຈະກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ V
## ຄວາມຮັບຜິດຊອບຕໍ່ການພັດທະນາ ແລະ ປົກປ້ອງແມ່ຍິງ

### ມາດຕາ 39. ຄວາມຮັບຜິດຊອບຂອງລັດ

ລັດວາງນະໂຍບາຍ, ລະບຽບກົດໝາຍ, ກົນໄກ ແລະ ມາດຕະການຕ່າງໆຢ່າງເປັນລະບົບ ກ່ຽວກັບການພັດທະນາ, ປົກປ້ອງສິດ, ຜົນປະໂຫຍດຂອງແມ່ຍິງ ລວມທັງການສະກັດກັ້ນ, ຕ້ານການຄ້າແມ່ຍິງ ແລະເດັກນ້ອຍ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍໃນຄອບຄົວ ແລ້ວມອບໃຫ້ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ.

ລັດສະໜອງງົບປະມານຕາມຄວາມເໝາະສົມ ເພື່ອຮັບໃຊ້ການເຄື່ອນໄຫວຂອງອົງການທີ່ເຮັດໜ້າທີ່ບັນເທົາທຸກແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ.

ເພື່ອເຮັດໃຫ້ການພັດທະນາ ແລະ ປົກປ້ອງແມ່ຍິງມີປະສິດທິຜົນດີຂຶ້ນນັ້ນ ລັດມີນະໂຍບາຍໃຫ້ສ້າງຕັ້ງກອງທຶນພັດທະນາແມ່ຍິງຂຶ້ນ.

### ມາດຕາ 40. ຄວາມຮັບຜິດຊອບຂອງສັງຄົມ

ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ມີຄວາມຮັບຜິດຊອບໃນການສຶກສາອົບຮົມ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃນການພັດທະນາ ແລະປົກປ້ອງສິດ, ຜົນປະໂຫຍດຂອງແມ່ຍິງພ້ອມກັນນັ້ນ ກໍເຂົ້າຮ່ວມໃນການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ກົນໄກ ແລະ ມາດຕະການຕ່າງໆຂອງລັດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 39 ຂອງກົດໝາຍສະບັບນີ້.

### ມາດຕາ 41. ຄວາມຮັບຜິດຊອບຂອງຄອບຄົວ

ຄອບຄົວຊຸກຍູ້, ສົ່ງເສີມ ແລະ ໃຫ້ໂອກາດແກ່ແມ່ຍິງ ແລະ ເດັກນ້ອຍ ໃນການພັດທະນາຕົນເອງຢ່າງຮອບດ້ານ, ໄດ້ຮັບຄວາມສະເໝີພາບ, ສິດ, ຜົນປະໂຫຍດດ້ານຕ່າງໆ. ນອກຈາກນີ້ ຄອບຄົວຍັງມີພັນທະໃນການປົກປ້ອງແມ່ຍິງ ແລະເດັກນ້ອຍຈາກການຄ້າມະນຸດ ລວມທັງການໃຊ້ຄວາມຮຸນແຮງໃນຄອບຄົວ.

### ມາດຕາ 42. ຄວາມຮັບຜິດຊອບຂອງແມ່ຍິງ

ແມ່ຍິງຕ້ອງເປັນເຈົ້າການໃນການພັດທະນາຕົນເອງທາງດ້ານຮ່າງກາຍ, ຈິດໃຈ, ການສຶກສາ, ວິຊາຊີບ ແລະ ສີມືແຮງງານ, ຍົກລະດັບທາງດ້ານການເມືອງ, ແນວຄິດ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ. ນອກຈາກນີ້

ແມ່ຍິງຍັງຕ້ອງເປັນເຈົ້າການໃນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງຕົນ, ມີສະຕິລະວັງຕົວບໍ່ໃຫ້ຕົກເປັນເຫຍື່ອຂອງການຄ້າແມ່ຍິງ ແລະເດັກນ້ອຍ, ສະກັດກັ້ນ, ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ລວມທັງຕ້ານການໃຊ້ຄວາມຮຸນແຮງໃນຄອບຄົວ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາການພັດທະນາ ແລະ ການປົກປ້ອງແມ່ຍິງ

### ມາດຕາ 43. ອົງການຄຸ້ມຄອງ ແລະ ກວດກາ

ລັດຖະບານຄຸ້ມຄອງຢ່າງເປັນເອກະພາບ ແລະ ກວດກາການຈັດຕັ້ງປະຕິບັດກ່ຽວກັບການພັດທະນາ ແລະ ການປົກປ້ອງແມ່ຍິງ.

ລັດຖະບານມອບໃຫ້ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ຂະແໜງສາທາລະນະສຸກ, ສຶກສາ, ຖະແຫລງຂ່າວ ແລະວັດທະນະທຳ, ແຮງງານ ແລະສະຫວັດດີການສັງຄົມ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ອົງການປົກຄອງທ້ອງຖິ່ນ, ພ້ອມກັບສະຫະພັນແມ່ຍິງລາວ, ແນວລາວສ້າງຊາດ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ອົງການໄອຍະການປະຊາຊົນ ຄຸ້ມຄອງ ແລະກວດກາກ່ຽວກັບການພັດທະນາ ແລະການປົກປ້ອງ ແມ່ຍິງ.

ໃນການຄຸ້ມຄອງ ແລະກວດກາກ່ຽວກັບການພັດທະນາ ແລະການປົກປ້ອງແມ່ຍິງ ແມ່ນສະຫະພັນແມ່ຍິງລາວເປັນໃຈກາງໃນການປະສານງານລະຫວ່າງພາກສ່ວນຕ່າງໆ ທີ່ ກ່ຽວຂ້ອງ.

ໃນກໍລະນີທີ່ຈຳເປັນ ລັດຖະບານຈະສ້າງຄະນະກຳມະການສະເພາະກິດ ກ່ຽວກັບການຄຸ້ມຄອງ ແລະ ກວດກາການພັດທະນາ ແລະ ການປົກປ້ອງແມ່ຍິງຂຶ້ນກໍໄດ້.

### ມາດຕາ 44. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາຕ່າງໆ ທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ມີໜ້າທີ່ວາງລະບຽບການ, ມາດຕະການ ແລະ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະກວດກາກ່ຽວກັບການພັດທະນາ ແລະ ການປົກປ້ອງແມ່ຍິງຕາມຂອບເຂດ ສິດ ແລະໜ້າທີ່ຂອງຕົນ.

### ມາດຕາ 45. ສິດ ແລະ ໜ້າທີ່ຂອງສູນກາງສະຫະພັນແມ່ຍິງລາວ

ໃນການຄຸ້ມຄອງ ແລະກວດກາກ່ຽວກັບການພັດທະນາ ແລະການປົກປ້ອງແມ່ຍິງ ສູນກາງສະຫະພັນແມ່ຍິງລາວ ມີສິດ ແລະໜ້າທີ່ຕົ້ນຕໍດັ່ງນີ້:

1. ຄົ້ນຄວ້າ, ສ້າງຮ່າງນະໂຍບາຍ, ແຜນການ, ໂຄງການ, ລະບຽບກົດໝາຍ ທີ່ພົວພັນເຖິງການ ພັດທະນາ ແລະການປົກປ້ອງແມ່ຍິງ ເພື່ອສະເໜີຕໍ່ອົງການທີ່ກ່ຽວຂ້ອງພິຈາລະນາຕົກລົງ;

2. ໂຄສະນາ, ສຶກສາອົບຮົມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດກ່ຽວກັບການພັດທະນາ ແລະ ການປົກປ້ອງແມ່ຍິງ;
3. ຈັດຕັ້ງການໃຫ້ຄໍາປຶກສາກ່ຽວກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ;
4. ຊີ້ນໍາ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແນວທາງ,ກົດໝາຍ, ແຜນການ, ແຜນງານ, ໂຄງການຕ່າງໆ ກ່ຽວກັບການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ແນະນໍາ ຫຼື ສະເໜີໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂການກະທໍາທີ່ບໍ່ຖືກຕ້ອງ ແລະ ໃຫ້ຄໍາຕອບພາຍໃນກໍານົດ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄໍາສະເໜີເປັນຕົ້ນໄປ. ໃນກໍລະນີທີ່ບໍ່ໄດ້ຮັບການແກ້ໄຂ ຫລືແກ້ໄຂບໍ່ເໝາະສົມນັ້ນ ສູນກາງສະຫະພັນແມ່ຍິງລາວມີສິດສະເໜີຕໍ່ອົງການຂັ້ນເທິງຖັດນັ້ນ ພິຈາລະນາແກ້ໄຂ. ຖ້າວ່າການກະທໍານັ້ນເປັນການກະທໍາຜິດທີ່ຮ້າຍແຮງກໍມີສິດສະເໜີໃຫ້ເຈົ້າໜ້າທີ່ຕໍາຫລວດດໍາເນີນຄະດີຕໍ່ຜູ້ລະເມີດ ຕາມກົດໝາຍ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະກວດກາການຈັດຕັ້ງປະຕິບັດການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະເດັກນ້ອຍ;
7. ສະຫຼຸບຕີລາຄາ ແລະລາຍງານການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການພັດທະນາແລະປົກປ້ອງແມ່ຍິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 46. ສິດ ແລະ ໜ້າທີ່ຂອງສະຫະພັນແມ່ຍິງຂັ້ນຂະແໜງການ ແລະ ທ້ອງຖິ່ນ**

ໃນການຄຸ້ມຄອງ ແລະ ກວດກາການພັດທະນາ ແລະ ການປົກປ້ອງແມ່ຍິງ ສະຫະພັນແມ່ຍິງຂັ້ນຂະແໜງການ ແລະ ທ້ອງຖິ່ນ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຄົ້ນຄວ້າ, ໂຄສະນາ, ເຜີຍແຜ່, ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ໂຄງການ, ກ່ຽວກັບການພັດທະນາ ແລະ ການປົກປ້ອງແມ່ຍິງ;
2. ໃຫ້ຄໍາປຶກສາກ່ຽວກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ;
3. ຊີ້ນໍາ ແລະກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ, ວຽກງານຕ່າງໆກ່ຽວກັບການພັດທະນາ ແລະ ການປົກປ້ອງແມ່ຍິງ ທີ່ນອນຢູ່ໃນຂອບເຂດຄວາມຮັບ ຜິດຊອບຂອງຕົນ;
4. ແນະນໍາ ຫຼື ສະເໜີໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂການກະທໍາທີ່ບໍ່ຖືກຕ້ອງ ແລະ ໃຫ້ຄໍາຕອບພາຍໃນກໍານົດ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບຄໍາສະເໜີເປັນຕົ້ນໄປ. ໃນກໍລະນີທີ່ບໍ່ໄດ້ຮັບການແກ້ໄຂ ຫລື ແກ້ໄຂບໍ່ເໝາະສົມນັ້ນ ສະຫະພັນແມ່ຍິງຂັ້ນຂະແໜງການ ແລະທ້ອງຖິ່ນ ມີສິດສະເໜີຕໍ່ອົງການຂັ້ນເທິງຖັດນັ້ນພິຈາລະນາແກ້ໄຂ. ຖ້າວ່າ

ການກະທຳນັ້ນເປັນການກະທຳຜິດທີ່ຮ້າຍແຮງ ກໍມີສິດສະເໜີໃຫ້ເຈົ້າໜ້າທີ່ຕຳຫລວດດຳເນີນຄະດີຕໍ່ຜູ້ລະເມີດ ຕາມກົດໝາຍ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະກວດກາກ່ຽວກັບການຈັດຕັ້ງປະຕິບັດການພັດທະນາ ແລະປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ;
6. ສະຫຼຸບຕີລາຄາ ແລະລາຍງານການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການພັດທະນາແລະປົກປ້ອງແມ່ຍິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ, ເຂົ້າຮ່ວມ, ຄຸ້ມຄອງ, ກວດກາ ການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ສະກັດກັ້ນ, ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ຫຼື ການໃຊ້ຄວາມຮຸນແຮງໃນຄອບຄົວ ລວມທັງການໃຫ້ຄຳປຶກສາ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ.

### ມາດຕາ 48. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ເຊັ່ນ: ມາດຕະການສຶກສາອົບຮົມ ຫຼື ມາດຕະການທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

### ມາດຕາ 49. ມາດຕະການທາງອາຍາຕໍ່ການຄ້າແມ່ຍິງ ແລະ ເດັກນ້ອຍ

ບຸກຄົນໃດຫາກໄດ້ກະທຳຜິດໃນສະຖານການຄ້າແມ່ຍິງ ແລະເດັກນ້ອຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ຂອງກົດໝາຍອາຍາ.

ໃນກໍລະນີທີ່ຜູ້ກະທຳຜິດມີການຈັດຕັ້ງເປັນກຸ່ມ, ຜູ້ຖືກເຄາະຮ້າຍເປັນເດັກ, ຜູ້ຖືກເຄາະ ຮ້າຍມີຈຳນວນແຕ່ສອງຄົນຂຶ້ນໄປ, ເປັນຍາດໃກ້ຊິດຂອງຜູ້ກະທຳຜິດ, ຜູ້ຖືກເຄາະຮ້າຍໄດ້ຮັບບາດເຈັບ

ສາຫັດ, ເສຍອົງຄະ ຫລືເສຍຈິດ ຜູ້ກະທຳຜິດໃນສະຖານການຄ້າແມ່ຍິງ ແລະເດັກນ້ອຍຈະຖືກລົງໂທດຕັດອິດສະລະພາບ ແຕ່ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝແຕ່ 100.000.000 ກີບ ຫາ 500.000.000. ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 32 ຂອງກົດໝາຍອາຍາ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍພິການຕະຫຼອດຊີວິດ, ຕິດໂລກເອດ ຫຼື ເສຍຊີວິດ ຜູ້ກະທຳຜິດໃນສະຖານການຄ້າແມ່ຍິງ ແລະ ເດັກນ້ອຍຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ຂອງກົດໝາຍ ອາຍາ ຫຼື ປະຫານຊີວິດ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

ບຸກຄົນໃດຫາກໄດ້ສົມຮູ້ຮ່ວມຄິດໃນການຄ້າແມ່ຍິງ ແລະ ເດັກນ້ອຍ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 3 ມາດຕາ 24 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕັດອິດສະລະພາບແຕ່ ສີ່ປີ ຫາສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ ແລະຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍອາຍາ.

### ມາດຕາ 50. ມາດຕະການຕໍ່ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ

ບຸກຄົນໃດຫາກໄດ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30, 31, 32 ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີທີ່ການໃຊ້ຄວາມຮຸນແຮງໃນຄອບຄົວ ຫາກເປັນການກະທຳຜິດທາງອາຍາຜູ້ກະທຳຜິດ ຈະຖືກລົງໂທດຕາມກົດໝາຍອາຍາ.

### ມາດຕາ 51. ມາດຕະການທາງອາຍາຕໍ່ຜູ້ທີ່ບໍ່ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ

ບຸກຄົນໃດຫາກບໍ່ໄດ້ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຄ້າແມ່ຍິງ ແລະເດັກນ້ອຍ ຫຼື ຈາກການໃຊ້ຄວາມຮຸນແຮງໃນຄອບຄົວທີ່ເປັນອັນຕະລາຍຮ້າຍແຮງ ທັງໆທີ່ຕົນມີຄວາມສາມາດຊ່ວຍເຫຼືອໄດ້ ຈະຖືກລົງໂທດຕາມມາດຕາ 86 ຂອງກົດໝາຍອາຍາ.

### ມາດຕາ 52. ມາດຕະການທາງແພ່ງ

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນ ມາດຕາ 49, 50 ແລະ 51 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຍັງຈະໄດ້ໃຊ້ແທນຄ່າເສຍຫາຍຕ່າງໆ ເຊັ່ນ: ຄ່າປິ່ນປົວ, ຄ່າປົວແປງຈິດໃຈ, ຄ່າປ່ວຍການ, ຄ່າເດີນທາງ, ຄ່າກິນຢູ່ພັກເຊົາ ແລະ ຄ່າເສຍຫາຍອື່ນໆ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 53. ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສູນກາງ ສະຫະພັນແມ່ຍິງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 54. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດພາຍຫຼັງເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສະໝານ ວິຍະເກດ